# BIÊN BẢN HỢP TÁC
# GIỮA
# TỈNH BẮC NINH, NƯỚC CHXHCN VIỆT NAM
# VÀ
# TỈNH HỦA PHĂN, NƯỚC CHDCND LÀO
# GIAI ĐOẠN 2022 – 2025

Trong khuôn khổ chuyến thăm và làm việc chính thức của đoàn đại biểu cấp cao tỉnh Bắc Ninh, nước CHXHCN Việt Nam tại tỉnh Hủa Phăn, nước CHDCND Lào; Hôm nay, ngày 21/6/2022 tại phòng họp tầng 02, Văn phòng Ủy ban chính quyền tỉnh Hủa Phăn, đoàn đại biểu cấp cao tỉnh Bắc Ninh và đoàn đại biểu cấp cao tỉnh Hủa Phăn đã tiến hành hội đàm. Đoàn đại biểu cấp cao tỉnh Bắc Ninh, nước CHXHCN Việt Nam do đồng chí **Nguyễn Hương Giang**, Phó Bí thư Tỉnh ủy, Chủ tịch UBND tỉnh làm Trưởng đoàn. Đoàn đại biểu cấp cao tỉnh Hủa Phăn, nước CHDCND Lào do đồng chí **Văn Xay Pheng Xum Ma**, Ủy viên Trung ương Đảng Nhân dân cách mạng Lào, Bí thư Tỉnh ủy, Tỉnh trưởng làm Trưởng đoàn.

Hai bên đã thông báo cho nhau về tình hình phát triển kinh tế - xã hội của hai địa phương trong thời gian qua, tình hình hợp tác giữa hai bên trên cơ sở Biên bản hợp tác đã ký ngày 14/7/2017 tại tỉnh Hủa Phăn.

Nhằm tiếp tục củng cố truyền thống mối quan hệ hữu nghị vĩ đại, đoàn kết đặc biệt, hợp tác toàn diện giữa hai nước Việt Nam – Lào nói chung và hai tỉnh Bắc Ninh – Hủa Phăn nói riêng; sau quá trình trao đổi, hai tỉnh Bắc Ninh – Hủa Phăn (sau đây gọi là hai bên) đã thống nhất ký biên bản này để triển khai việc hợp tác cho giai đoạn 2022 - 2025 bằng những hoạt động thiết thực, cụ thể như sau:

1. Hai bên thống nhất tiếp tục duy trì các nội dung trong biên bản hợp tác đã ký kết giữa hai tỉnh, duy trì trao đổi đoàn cấp cao tối thiểu 2 năm/lần và tạo điều kiện để các cấp, ngành, địa phương của hai bên trao đổi, chia sẻ thông tin và học tập kinh nghiệm trên công tác xây dựng Đảng, xây dựng hệ thống chính trị, phát triển kinh tế - xã hội, an ninh - quốc phòng.

2. Hai bên tăng cường công tác tuyên truyền về mối quan hệ đặc biệt Việt Nam – Lào tới quần chúng nhân dân, đặc biệt là thế hệ trẻ của hai địa phương nhằm hưởng ứng "Năm Đoàn kết Hữu nghị Việt Nam – Lào, Lào – Việt Nam 2022".

3. Hai bên tiếp tục tạo điều kiện thuận lợi cho doanh nghiệp của hai bên đẩy mạnh các hoạt động đầu tư, kinh doanh tại địa phương theo đúng quy định

của pháp luật của nước sở tại. Ngoài ra, tỉnh Bắc Ninh sẽ hỗ trợ Hủa Phăn thúc đẩy xúc tiến đầu tư nước ngoài vào địa bàn tỉnh, kêu gọi các doanh nghiệp của Bắc Ninh sang đầu tư tại Hủa Phăn nhằm phát triển kinh tế, cải thiện, nâng cao đời sống cho người dân Hủa Phăn.

4. Tỉnh Bắc Ninh sẽ tiếp tục hỗ trợ xây dựng cơ sở hạ tầng cho tỉnh Hủa Phăn trên cơ sở khả năng ngân sách của tỉnh và được sự đồng ý của cấp có thẩm quyền.

5. Hằng năm, tỉnh Bắc Ninh đồng ý tiếp tục giúp đào tạo nguồn nhân lực, cấp tối đa 15 suất học bổng cho các em học sinh Hủa Phăn sang học tập tại các trường Cao đẳng công lập trên địa bàn tỉnh và tỉnh Hủa Phăn đồng ý giúp đào tạo nguồn nhân lực cho tỉnh Bắc Ninh với 1-2 suất học bổng.

6. Hai bên thống nhất tiếp tục giao cho cơ quan ngoại vụ của mỗi bên là cơ quan đầu mối, phối hợp với các cơ quan liên quan tham mưu, tổ chức thực hiện.

Biên bản hợp tác này được lập thành hai bản bằng tiếng Việt và hai bản bằng tiếng Lào có giá trị như nhau và có hiệu lực kể từ ngày ký, mỗi bên giữ một bản tiếng Việt và một bản tiếng Lào để cùng thực hiện./.

| **T/M. TỈNH BẮC NINH** | **T/M. TỈNH HỦA PHĂN** |
| --- | --- |
| **Nguyễn Hương Giang** | **Văn Xay Pheng Xum Ma** |
| PHÓ BÍ THƯ TỈNH ỦY,<br>CHỦ TỊCH UBND TỈNH BẮC NINH | ỦY VIÊN TRUNG ƯƠNG ĐẢNG<br>BÍ THƯ TỈNH ỦY<br>TỈNH TRƯỞNG TỈNH HỦA PHĂN |

## ບົດບັນທຶກການຮ່ວມມື ໄລຍະປີ 2022 - 2025
## ລະຫວ່າງແຂວງຫົວພັນ ແຫ່ງ ສປປ ລາວ ແລະ ແຂວງບັກນິງ ແຫ່ງ ສສ ຫວຽດນາມ

ໃນການມາຢ້ຽມຢາມ ແລະ ເຮັດວຽກ ຢ່າງເປັນທາງການຂອງຄະນະຜູ້ແທນຂັ້ນສູງແຂວງບັກນິງ ແຫ່ງ ສສ ຫວຽດນາມ ຢູ່ແຂວງຫົວພັນ ແຫ່ງ ສປປ ລາວ ໃນຄັ້ງນີ້; ມື້ນີ້, ວັນທີ 21 ມິຖຸນາ 2022 ຢູ່ທີ່ຫ້ອງປະຊຸມຊັ້ນ 2, ສໍານັກງານອົງການປົກຄອງແຂວງຫົວພັນ, ຄະນະຜູ້ແທນຂັ້ນສູງແຂວງຫົວພັນ ແລະ ຄະນະຜູ້ແທນຂັ້ນສູງແຂວງບັກນິງ ໄດ້ດໍາເນີນກອງປະຊຸມ. ຄະນະຜູ້ແທນຂັ້ນສູງແຂວງຫົວພັນ ແຫ່ງ ສປປ ລາວ ນໍາໂດຍ ສະຫາຍ **ວັນໄຊ ແພງຊຸມມາ**, ກໍາມະການສູນກາງພັກປະຊາຊົນປະຕິວັດລາວ, ເລຂາພັກແຂວງ, ເຈົ້າແຂວງຫົວພັນ ເປັນຫົວໜ້າຄະນະ. ຄະນະຜູ້ແທນຂັ້ນສູງແຂວງບັກນິງ ແຫ່ງ ສສ ຫວຽດນາມ ນໍາໂດຍສະຫາຍ **ນ. ຫງວຽນ ເຮືອງ ຢາງ**, ຮອງເລຂາພັກແຂວງ, ປະທານຄະນະກໍາມະການປະຊາຊົນແຂວງບັກນິງ ເປັນຫົວໜ້າຄະນະ.

ສອງຝ່າຍໄດ້ພົດປ່ຽນກັນລາຍງານໂດຍຫຍໍ້ ກ່ຽວກັບສະພາບການພັດທະນາເສດຖະກິດ - ສັງຄົມ ຂອງແຕ່ລະແຂວງໃນໄລຍະຜ່ານມາ, ສະພາບການຮ່ວມມືລະຫວ່າງສອງຝ່າຍ ບົນພື້ນຖານບົດບັນທຶກການຮ່ວມມື ທີ່ໄດ້ລົງນາມຄັ້ງວັນທີ 14 ກໍລະກົດ 2017 ຢູ່ທີ່ແຂວງຫົວພັນ.

ເພື່ອສືບຕໍ່ເສີມຂະຫຍາຍສາຍພົວພັນມູນເຊື້ອມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ, ການຮ່ວມມືຮອບດ້ານລະຫວ່າງ ສອງປະເທດ ລາວ - ຫວຽດນາມ ເວົ້າລວມ, ເວົ້າສະເພາະ ສອງແຂວງ ຫົວພັນ - ບັກນິງ; ຜ່ານການພົບປະແລກປ່ຽນ, ສອງແຂວງ ຫົວພັນ - ບັກນິງ ( ຕໍ່ໄປນີ້ເອີ້ນຫຍໍ້ວ່າສອງຝ່າຍ ) ໄດ້ເປັນເອກະພາບລົງນາມບົດບັນທຶກສະບັບນີ້ ເພື່ອຈັດຕັ້ງພັນຂະຫຍາຍການຮ່ວມມື ໃນໄລຍະປີ 2022 - 2025 ດ້ວຍການເຄື່ອນໄຫວບັນດາກິດຈະກໍາຕົວຈິງ ລາຍລະອຽດມີດັ່ງລຸ່ມນີ້:

1. ສອງຝ່າຍເຫັນດີເປັນເອກະພາບ ໃນການສືບຕໍ່ຮັກສາບັນດາເນື້ອໃນບົດບັນທຶກການຮ່ວມມື ທີ່ໄດ້ລົງນາມລະຫວ່າງສອງແຂວງ, ຮັກສາການພົບປະແລກປ່ຽນຄະນະຜູ້ແທນຂັ້ນສູງ ຢ່າງໜ້ອຍແມ່ນ 02 ປີຕໍ່ຄັ້ງ ແລະ ສ້າງເງື່ອນໄຂອໍານວຍຄວາມສະ ດວກໃຫ້ບັນດາພະແນກ, ຂະແໜງການ, ທ້ອງຖິ່ນ ຂອງສອງຝ່າຍ ໄດ້ມີການພົບປະ, ແລກປ່ຽນຂໍ້ມູນຂ່າວສານ ແລະ ຖອດຖອນບົດຮຽນໃນວຽກງານການກໍ່ສ້າງພັກ, ກໍ່ສ້າງລະບົບການເມືອງ, ພັດທະນາເສດຖະກິດ - ສັງຄົມ, ປ້ອງກັນຊາດ - ປ້ອງກັນຄວາມສະຫງົບ.
2. ສອງຝ່າຍສືບຕໍ່ເພີ່ມທະວີໃນວຽກງານການໂຄສະນາ ກ່ຽວກັບສາຍພົວພັນພິເສດ ລາວ - ຫວຽດນາມ ໃຫ້ແກ່ມວນຊົນ, ພິເສດ ແມ່ນຄົນຮຸ່ນໜຸ່ມຂອງສອງທ້ອງຖິ່ນ ເພື່ອເປັນການຮ່ວມສະເຫຼີມສະຫຼອງ " ປີສາມັກຄີມິດຕະພາບ ລາວ - ຫວຽດນາມ, ຫວຽດນາມ - ລາວ ປີ 2022 ".
3. ສອງຝ່າຍສືບຕໍ່ສ້າງເງື່ອນໄຂອໍານວຍຄວາມສະດວກ ໃຫ້ແກ່ຫົວໜ່ວຍທຸລະກິດຂອງສອງຝ່າຍ ຊຸກຍູ້ສົ່ງເສີມການເຄື່ອນໄຫວບັນດາກິດຈະກໍາການລົງທຶນ, ດໍາເນີນທຸລະກິດ ຢູ່ທ້ອງຖິ່ນ ໃຫ້ຖືກຕ້ອງຕາມຂໍ້ກໍານົດຂອງກົດໝາຍປະເທດເຈົ້າພາບ. ນອກຈາກນັ້ນ, ແຂວງບັກນິງ ຈະຊ່ວຍເຫຼືອແຂວງຫົວພັນ ໃນການຊຸກຍູ້ສົ່ງເສີມການລົງທຶນຈາກຕ່າງປະເທດ ເຂົ້າມາພາຍໃນແຂວງ, ດຶງດູດບັນດາຫົວໜ່ວຍທຸລະກິດຂອງແຂວງບັກນິງ ເຂົ້າມາລົງທຶນຢູ່ແຂວງຫົວພັນ ເພື່ອແນໃສ່ພັດທະນາເສດຖະກິດ, ປັບປຸງ, ຍົກສູງຊີວິດການເປັນຢູ່ໃຫ້ແກ່ປະຊາຊົນແຂວງຫົວພັນ.
4. ແຂວງບັກນິງ ຈະສືບຕໍ່ຊ່ວຍເຫຼືອກໍ່ສ້າງພື້ນຖານໂຄງລ່າງໃຫ້ແກ່ແຂວງຫົວພັນ ບົນພື້ນຖານຄວາມອາດສາມາດດ້ານງົບປະມານຂອງແຂວງ ແລະ ໄດ້ຮັບການເຫັນດີຈາກຂັ້ນທີ່ມີສິດອໍານາດ.

5. ແຕ່ລະປີ, ແຂວງບັກນິງ ເຫັນດີສືບຕໍ່ຊ່ວຍກໍ່ສ້າງຊັບພະຍາກອນມະນຸດໃຫ້ແກ່ນັກສຶກສາແຂວງຫົວພັນ ຈຳນວນ 15 ທຶນ ໄປຮຽນຢູ່ບັນດາໂຮງຮຽນວິທະຍາໄລຂອງລັດ ພາຍໃນແຂວງບັກນິງ ແລະ ແຂວງຫົວພັນ ເຫັນດີຊ່ວຍກໍ່ສ້າງຊັບພະຍາກອນມະນຸດໃຫ້ແກ່ແຂວງບັກນິງ ຈຳນວນ 1 - 2 ທຶນ.

6. ສອງຝ່າຍເປັນເອກະພາບ ສືບຕໍ່ມອບໃຫ້ຂະແໜງການຕ່າງປະເທດແຕ່ລະຝ່າຍ ເປັນຜູ້ປະສານງານຫຼັກ, ປະສານສົມທົບກັບບັນດາພະແນກ, ຂະແໜງການ ທີ່ກ່ຽວຂ້ອງ ໃນການເປັນເສນາທິການ ແລະ ຈັດຕັ້ງປະຕິບັດ.

ບົດບັນທຶກສະບັບນີ້, ໄດ້ສ້າງເປັນພາສາລາວ 02 ສະບັບ ແລະ ພາສາຫວຽດ 02 ສະບັບ, ແຕ່ລະສະບັບລ້ວນແຕ່ມີຄຸນຄ່າເທົ່າທຽມກັນ ແລະ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ, ແຕ່ລະຝ່າຍຮັກສາພາສາລາວ 01 ສະບັບ ແລະ ພາສາຫວຽດ 01 ສະບັບ ເພື່ອພ້ອມກັນຈັດຕັ້ງປະຕິບັດ.

| ຕາງໜ້າ ແຂວງຫົວພັນ | ຕາງໜ້າ ແຂວງບັກນິງ |
|---|---|
| ວັນໄຊ ແພງຊຸມມາ | ຫງວຽນ ເຮືອງ ຢາງ |
| ກຳມະການສູນກາງພັກ, ເລຂາພັກແຂວງ | ຮອງເລຂາພັກແຂວງ |
| ເຈົ້າແຂວງຫົວພັນ | ປະທານຄະນະກຳມະການປະຊາຊົນແຂວງບັກນິງ |